ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 506/ອອປສ

ນະຄອນຫຼວງວຽງຈັນ, ວັນທີ 13/09/2011

# ຂໍ້ຕົກລົງ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການປະຊາຊົນສູງສຸດ

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນສະບັບປັບປຸງໃໝ່ປີ 2009
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ກ່ຽວກັບ ການເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສ ປ ປ ລາວ ສະບັບເລກທີ 09/ສພຊ, ລົງວັນທີ 16 ມິຖຸນາ 2011
- ອີງຕາມ ການສະເໜີຂອງ ກົມຈັດຕັ້ງ - ພະນັກງານ ອົງການໄອຍະການປະຊາຊົນສູງສຸດ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດອອກຂໍ້ຕົກລົງ

## ໝວດທີ I

## ທີ່ຕັ້ງ ແລະ ພາລະບົດບາດ ຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ

ມາດຕາ 1: ຈຸດປະສົງ

ຈຸດປະສົງຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ.

ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ

1. ທີ່ຕັ້ງ

ກົມກວດກາຄ້າຍຄຸມຂັງ-ດັດສ້າງຊຽນຫຍໍ້ວ່າ: " ກ ຄ ສ " ແມ່ນກົມໜຶ່ງໃນໂຄງປະກອບການຈັດຕັ້ງຂອງ ອົງການໄອຍະການປະຊາຊົນສູງສຸດ. ສ້າງຕັ້ງຂຶ້ນ ແລະ ຍຸບເລີກໂດຍ ຫົວໜ້າ

ອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງກົມຈັດຕັ້ງ - ພະນັກງານອົງການໄອຍະການປະຊາຊົນສູງສຸດ.

2. <u>ພາລະບົດບາດ</u>

ກົມກວດກາຄ້າຍຄຸມຂັງ-ດັດສ້າງ ມີພາລະບົດບາດເປັນເສນາທິການໃຫ້ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະ ຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ, ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດ ຂາດ ແລະ ຄົ້ນຄວ້າພິຈາລະນາ, ການຈັດຕັ້ງປະຕິບັດລັດຖະບັນຍັດຂອງປະທານປະເທດ ກ່ຽວກັບການສະເໜີໃຫ້ອະໄພຍະໂທດແກ່ນັກໂທດ

## <u>ໝວດທີ II</u>
## ສິດ ແລະ ໜ້າທີ່

<u>ມາດຕາ 3:</u> ສິດ ຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ

1. ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ ແລະ ວິສາຫະກິດ ກ່ຽວກັບການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ;
2. ຄົ້ນຄວ້າ ແລະ ນຳສະເໜີຄຳຄິດຄຳເຫັນ ກ່ຽວກັບ ບັນຫາຕ່າງໆໃນການເຄື່ອນໄຫວວຽກງານຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງຕໍ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
3. ສັງລວມສະພາບ ແລະ ເຫດການເພື່ອລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນສູງສຸດພິຈາລະນາປ່ອຍຕົວຜູ້ຖືກຄຸມຂັງ - ດັດສ້າງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ຄົ້ນຄວ້າພິຈາລະນາຄຳສະເໜີ, ຄຳຮ້ອງທຸກຂອງຜູ້ຖືກຄຸມຂັງ - ດັດສ້າງ, ບຸກຄົນ, ອົງການຈັດຕັ້ງຕ່າງໆ, ພາກສ່ວນທີ່ກ່ຽວຂ້ອງກັບຜູ້ຖືກຄຸມຂັງ - ດັດສ້າງ;
5. ຮຽກປະຊຸມ ຫຼື ພົບປະບຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອປຶກສາຫາລືບັນຫາຕ່າງໆທີ່ພົວພັນເຖິງວຽກງານຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ, ການປະຕິບັດຄຳຕັດສິນຂອງສານແພ່ງ - ອາຍາ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແລະ ວຽກງານການສະເໜີໃຫ້ອະໄພຍະໂທດໃຫ້ແກ່ນັກໂທດຕາມລະບຽບກົດໝາຍ;
6. ປະຕິບັດສິດອື່ນຕາມການຕົກລົງ ຫຼື ມອບໝາຍຈາກຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

### ມາດຕາ 4: ໜ້າທີ່ຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ

1. ຄົ້ນຄວ້າຊ່ວຍຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ ໃນການຫັນແນວທາງນະໂຍບາຍ, ມະຕິຄຳສັ່ງຕ່າງໆຂອງພັກ ແລະ ລັດ ກ່ຽວກັບວຽກງານຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ , ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ, ຄົ້ນຄວ້າພິຈາລະນາ ແລະ ຈັດຕັ້ງປະຕິບັດ ກ່ຽວກັບ ການສະເໜີໃຫ້ອະໄພຍະໂທດຕາມລະບຽບກົດໝາຍ;
2. ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດຄຸມຂັງ ແລະ ໄອຍະການປະຊາຊົນຢູ່ທ້ອງຖິ່ນ ລົງຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ;
3. ກວດກາເອກະສານຕ່າງໆ ກ່ຽວກັບ ການດັດສ້າງ ແລະ ປະຕິບັດມາດຕະການອື່ນໆຂອງສານ;
4. ເຂົ້າຮ່ວມກອງປະຊຸມຕ່າງໆ ( ທັງຢູ່ສູນກາງ ແລະ ທ້ອງຖິ່ນ ) ຕາມແຕ່ລະກໍລະນີ ແລະ ຕາມການເຫັນດີຈາກຂັ້ນເທິງ;
5. ອອກແຈ້ງການ, ເຜີຍແຜ່ມະຕິຄຳສັ່ງ, ຄຳແນະນຳຕ່າງໆຂອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ ແລະ ຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ ທີ່ພົວພັນເຖິງວຽກງານຕິດຕາມກວດກາການປະ ຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ, ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ, ເຂົ້າຮ່ວມການຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດທີ່ມີເງື່ອນໄຂໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດ ຕາມລະບຽບກົດໝາຍ;
6. ສອບຖາມສະພາບຂອງບຸກຄົນທີ່ຖືກດັດສ້າງ ແລະ ການປະຕິບັດມາດຕະການບັງຄັບອື່ນໆຂອງສານ;
7. ກວດກາບັນຊີລາຍຊື່ນັກໂທດ, ຜູ້ຖືກດັດສ້າງ ແລະ ເອກະສານຕ່າງໆ ເພື່ອຈະຄົ້ນຄວ້າການສະເໜີໃຫ້ອະໄພຍະໂທດ;
8. ກວດກາການລະເມີດກົດໝາຍຂອງເຈົ້າໜ້າທີ່ຕໍ່ບຸກຄົນທີ່ຖືກດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນໆຂອງສານ ແລະ ລາຍງານຄະນະນຳ ພິຈາລະນາ;
9. ກວດກາເອກະສານ, ຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຄະນະຮັບຜິດຊອບສະຖານທີ່ຄ້າຍຄຸມຂັງ-ດັດສ້າງ, ສູນດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນ ຂອງການລະເມີດກົດໝາຍ;
10. ປະຕິບັດໜ້າທີ່ອື່ນຕາມການຕົກລົງ ຫຼື ມອບໝາຍຈາກຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

## ໝວດທີ III

## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 5:** ໂຄງປະກອບການຈັດຕັ້ງ

ກົມກວດກາຄ້າຍຄຸມຂັງ-ດັດສ້າງ ປະກອບມີ ຫົວໜ້າກົມ 1 ທ່ານ ແລະ ຮອງຫົວໜ້າກົມ 2 ທ່ານ, ມີ 3 ພະແນກ ແລະ 1 ຂະແໜງບໍລິຫານ ຂາເຂົ້າ - ຂາອອກຄື:

- ພະແນກສູນດັດສ້າງ;
- ພະແນກຄ້າຍດັດສ້າງ ແລະ ອະໄພຍະໂທດ;
- ພະແນກກວດກາການປະຕິບັດຄຳຕັດສິນຂອງສານ;
- ຂະແໜງບໍລິຫານ ແລະ ຂາເຂົ້າ - ຂາອອກ.

**ມາດຕາ 6:** ພະນັກງານນຳພາ ແລະ ພະນັກງານວິຊາການຂອງກົມກວດກາຄ້າຍຄຸມຂັງ-ດັດສ້າງ

ກົມກວດກາຄ້າຍຄຸມຂັງ-ດັດສ້າງປະກອບມີຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າພະແນກ ແລະ ຫົວໜ້າຂະແໜງ ຖືກແຕ່ງຕັ້ງ, ໂຍກຍ້າຍ, ປົດຕຳແໜ່ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າກົມຈັດຕັ້ງ - ພະນັກງານ.

ກົມກວດກາຄ້າຍຄຸມຂັງ-ດັດສ້າງ ມີພະນັກງານໄອຍະການ, ຜູ້ຊ່ວຍໄອຍະການ ແລະ ພະນັກງານບໍລິຫານ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າກົມຈັດຕັ້ງ - ພະນັກງານ.

## ໝວດທີ IV

## ສິດ ແລະ ໜ້າທີ່ຂອງພະແນກ

**ມາດຕາ 7:** ສິດ, ໜ້າທີ່ຂອງພະແນກກວດກາສູນດັດສ້າງ

1. ຄົ້ນຄວ້າວາງທິດທາງ - ແຜນການ ການເຄື່ອນໄຫວຂອງພະແນກໃນແຕ່ລະໄລຍະ, ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງພະແນກ ຕໍ່ຄະນະນຳຂອງກົມເປັນປົກກະຕິ;
2. ຄົ້ນຄວ້າພິຈາລະນາ ຄຳສະເໜີ, ຄຳຮ້ອງ, ຄຳຮ້ອງທຸກຂອງຜູ້ຖືກດັດສ້າງ, ບຸກຄົນ ແລະ ການຈັດຕັ້ງຕ່າງໆທີ່ພົວພັນເຖິງຜູ້ຖືກດັດສ້າງ;
3. ລົງຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ສູນດັດສ້າງ ໃນຂອບເຂດທົ່ວປະເທດ, ສະຫລຸບລາຍງານຜົນການກວດກາດັ່ງກ່າວ ແລະ ສະຫຼຸບລາຍງານສະຖິຕິຜູ້ຖືກດັດສ້າງ ຕໍ່ຄະ

ນະນຳຂອງກົມ ເພື່ອລາຍງານໃຫ້ການນຳຂອງ ອົງການໄອຍະການປະຊາຊົນສູງສຸດເປັນປົກກະຕິ;

4. ກວດກາເອກະສານຕ່າງໆທີ່ພົວພັນເຖິງຜູ້ຖືກດັດສ້າງ;
5. ສອບຖາມບຸກຄົນທີ່ຖືກດັດສ້າງ ທີ່ເຫັນວ່າຖືກດັດສ້າງໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ກວດກາການປະຕິບັດນະໂຍບາຍດ້ານຕ່າງໆ ຂອງຄະນະຮັບຜິດຊອບສູນດັດສ້າງ ຕໍ່ຜູ້ຖືກດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ;
7. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຫົວໜ້າກົມ.

**<u>ມາດຕາ 8</u>: ສິດ, ໜ້າທີ່ຂອງພະແນກກວດກາຄ້າຍດັດສ້າງ ແລະ ອະໄພຍະໂທດ**

1. ຄົ້ນຄວ້າວາງທິດທາງ - ແຜນການ ການເຄື່ອນໄຫວຂອງພະແນກໃນແຕ່ລະໄລຍະ, ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງພະແນກ ຕໍ່ຄະນະນຳຂອງກົມເປັນປົກກະຕິ;
2. ຄົ້ນຄວ້າພິຈາລະນາຄຳສະເໜີ, ຄຳຮ້ອງທຸກຂອງນັກໂທດ, ບຸກຄົນ, ອົງການຈັດຕັ້ງຕ່າງໆ - ພາກສ່ວນທີ່ກ່ຽວຂ້ອງເຖິງນັກໂທດ;
3. ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດທີ່ມີເງື່ອນໄຂໄດ້ຮັບການສະເໜີໃຫ້ອະໄພຍະໂທດ;
4. ລົງຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ໃນຂອບເຂດທົ່ວປະເທດ ແລະ ສະຫລຸບລາຍງານຜົນການກວດກາດັ່ງກ່າວ, ສະຫລຸບລາຍງານສະຖິຕິນັກໂທດຕໍ່ຄະນະນຳຂອງກົມ ເພື່ອລາຍງານໃຫ້ການນຳຂອງອົງການໄອຍະການປະຊາຊົນສູງສຸດເປັນປົກກະຕິ;
5. ກວດກາເອກະສານຕ່າງໆທີ່ພົວພັນກັບການຄຸມຂັງ - ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນໆຂອງສານ;
6. ສອບຖາມບຸກຄົນທີ່ຖືກກັກຂັງ - ດັດສ້າງ ທີ່ເຫັນວ່າຖືກກັກຂັງ - ດັດສ້າງໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ກວດກາການປະຕິບັດນະໂຍບາຍດ້ານຕ່າງໆ ຂອງຄະນະຮັບຜິດຊອບຄ້າຍດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ;

**<u>ມາດຕາ 9</u>: ສິດ, ໜ້າທີ່ຂອງພະແນກກວດກາການປະຕິບັດຄຳຕັດສິນຂອງສານ**

1. ຄົ້ນຄວ້າວາງທິດທາງ - ແຜນການ ການເຄື່ອນໄຫວຂອງພະແນກໃນແຕ່ລະໄລຍະ, ສະຫລຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງພະແນກຕໍ່ຄະນະນຳຂອງກົມເປັນປົກກະຕິ;

2. ລົງຕິດຕາມກວດກາສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ, ສະຫລຸບລາຍງານຜົນການກວດກາດັ່ງກ່າວ ແລະ ສະຫລຸບລາຍງານບັນຊີສະຖິຕິຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຕໍ່ຄະນະນຳຂອງກົມ ເພື່ອລາຍງານໃຫ້ການນຳຂອງອົງການໄອຍະການປະຊາຊົນສູງສຸດ;
3. ປະສານສົມທົບ, ພົວພັນກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ເພື່ອປຸກລະດົມ, ຊຸກຍູ້ໃຫ້ອົງການດັ່ງກ່າວ, ຄູ່ຄວາມໃນຄະດີມີການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ຄຳຕັດສິນຂອງສານ;
4. ລົງເຜີຍແຜ່ເອກະສານ ກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ທ້ອງຖິ່ນໃນທົ່ວປະເທດ ແລະ ກວດກາຄຳຮ້ອງຂໍຄວາມເປັນຂອງປະຊາຊົນກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນທີ່ຍັງບໍ່ສອດຄ່ອງກັບກົດໝາຍ;
5. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫົວໜ້າກົມ;

## ໝວດທີ V
## ສິດ ແລະ ໜ້າທີ່ຂອງຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ

### ມາດຕາ 10: ສິດ ແລະ ໜ້າທີ່ຂອງຫົວໜ້າກົມ

1. ຊີ້ນຳ ແລະ ນຳພາວຽກງານລວມ, ສ້າງແຜນການເຄື່ອນໄຫວວຽກງານຂອງກົມໃນແຕ່ລະໄລຍະໃຫ້ສອດຄ່ອງ ກັບແຜນພັດທະນາວຽກງານຂອງອົງການໄອຍະການປະຊາຊົນສູງສຸດ;
2. ພົວພັນໂດຍກົງກັບຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອລາຍງານວຽກງານ ແລະ ນຳເອົາມະຕິຄຳສັ່ງໄປຜັນຂະຫຍາຍຈັດຕັ້ງປະຕິບັດ;
3. ມີຄຳເຫັນ, ອອກຄຳສັ່ງ, ແຈ້ງການຕ່າງໆໃຫ້ພະແນກ, ທ້ອງຖິ່ນ ຫຼື ພາກສ່ວນຕ່າງໆທີ່ກ່ຽວຂ້ອງກ່ຽວກັບ ວຽກງານຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ;
4. ກວດຜ່ານ, ເຊັນຫຍໍ້ ເອກະສານຕ່າງໆ ກ່ອນຈະສົ່ງໄປຂໍຄຳເຫັນ ຫຼື ລາຍເຊັນຈາກຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ;
5. ຕາງໜ້າໃຫ້ກົມເຄື່ອນໄຫວພົວພັນກັບອົງການຈັດຕັ້ງພັກ - ລັດ ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສະຫະກິດ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ຕາມຂອບເຂດສິດ, ໜ້າທີ່ຂອງກົມ;

6. ເປັນປະທານກອງປະຊຸມກົມ, ກອງປະຊຸມພະນັກງານວິຊາການພາຍໃນ ແລະ ກອງປະຊຸມກັບຫລາຍພາກສ່ວນທີ່ພົວພັນເຖິງວຽກງານຄ້າຍຄຸມຂັງ-ດັດສ້າງ;
7. ເຊັນເອກະສານຕ່າງໆທີ່ໃຊ້ພາຍໃນອົງການໄອຍະການປະຊາຊົນສູງສຸດ ແລະ ທ້ອງຖິ່ນຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ຂອບເຂດສິດ - ໜ້າທີ່ຂອງກົມ;
8. ຊີ້ນຳໂດຍກົງວຽກງານຂະແໜງບໍລິຫານ ແລະ ຂາເຂົ້າ - ຂາອອກ;
9. ມອບສິດໃຫ້ຮອງຫົວໜ້າກົມວ່າການແທນໃນເວລາຫົວໜ້າກົມບໍ່ຢູ່ຫຼືຕິດຂັດ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ມາດຕາ 11: ສິດ ແລະ ໜ້າທີ່ຂອງຮອງຫົວໜ້າກົມ

1. ຮອງຫົວໜ້າກົມ ເປັນຜູ້ຊ່ວຍວຽກຫົວໜ້າກົມ ປະຕິບັດສິດ - ໜ້າທີ່ຕາມການມອບໝາຍ ແລະ ປະຕິບັດຕາມຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
2. ຊ່ວຍຫົວໜ້າກົມສະຫຼຸບ ແລະ ຮ່າງທິດທາງແຜນການວຽກງານຂອງກົມ;
3. ຊີ້ນຳວຽກງານຕິດຕາມກວດກາ ພະແນກກວດຄ້າຍດັດສ້າງ ແລະ ສູນດັດສ້າງ;
4. ຊີ້ນຳວຽກງານຕິດຕາມກວດກາ ພະແນກກວດກາການປະຕິບັດຄຳຕັດສິນຂອງສານ;
5. ເຂົ້າຮ່ວມກອງປະຊຸມຕ່າງໆຕາມການມອບໝາຍຂອງຫົວໜ້າກົມ ຫຼື ປະຕິບັດໜ້າທີ່ຕາງຫົວໜ້າກົມ ໃນເວລາຫົວໜ້າຕິດຂັດ ຫຼື ບໍ່ສາມາດປະຕິບັດໜ້າທີ່ວຽກງານໄດ້;
6. ຮັບຜິດຊອບຊີ້ນຳວຽກງານຈັດຕັ້ງ-ບໍລິຫານ.

ມາດຕາ 12: ສິດ ແລະ ໜ້າທີ່ ຂອງຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຫົວໜ້າຂະແໜງ

- ພະແນກກວດກາສູນດັດສ້າງ

1. ຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:

1.1 ຮັບຜິດຊອບລວມພາຍໃນພະແນກ, ພົວພັນໂດຍກົງກັບຜູ້ຊີ້ນຳເຊັ່ນ: ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພາກສ່ວນກ່ຽວຂ້ອງ ເພື່ອລາຍງານວຽກງານຕ່າງໆ ແລະ ຮັບເອົາມະຕິຄຳສັ່ງໄປຜັນຂະຫຍາຍຢູ່ພາຍໃນພະແນກ, ມີຄຳເຫັນຕໍ່ບັນຫາຕ່າງໆທີ່ໜ່ວຍງານ, ວິຊາການເພື່ອສັງລວມຂໍຄຳເຫັນ ແລະ ຕິດຕາມການປະຕິບັດຄຳຕົກລົງ.

1.2 ກວດກາເອກະສານຕ່າງໆກ່ອນທີ່ຈະຂໍຄຳເຫັນ ຫຼື ລາຍເຊັນຈາກຂັ້ນເທິງ ແລະ ແຈກຢາຍວຽກງານທີ່ຂັ້ນເທິງເຫັນດີມອບໝາຍໃຫ້;

1.3 ສັງລວມບັນດາຂໍ້ມູນຕ່າງໆ ແຜນການເຄື່ອນໄຫວນຳພາວຽກງານພະແນກປະຈຳເດືອນຕາມທິດຊີ້ນຳຂອງກົມ;

1.4 ກວດກາ ແລະ ເຄື່ອນໄຫວວຽກງານຕິດຕາມພາລະບົດບາດຂອງພະແນກມອບໝາຍໃຫ້ບຸກຄົນຮັບຜິດຊອບ ແລະ ວາງທິດທາງແຜນການຕໍ່ໜ້າ ສ້າງບົດສະຫລຸບ ແລະ ແຜນການເຄື່ອນໄຫວຂອງພະແນກ;

1.5 ຄົ້ນຄວ້າຄຳຮ້ອງກ່ຽວກັບຜູ້ຖືກຫາ;

1.6 ສ້າງແຜນການຕ່າງໆ ກ່ຽວກັບການລົງເຄື່ອນໄຫວຕິດຕາມກວດກາສະຖານທີ່ກັກຕົວ, ກັກຂັງ ແລະ ຄຸມຂັງ-ດັດສ້າງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

1.7 ເຮັດວຽກງານການອະໄພຍະໂທດ ແລະ ວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າກົມ.

2. **ຮອງຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:**

2.1 ເປັນຜູ້ຊ່ວຍວຽກຫົວໜ້າພະແນກປະຕິບັດສິດ , ໜ້າທີ່ຕາມການມອບໝາຍ ແລະ ປະຕິບັດຕາມຄຳສັ່ງຂອງຫົວໜ້າກົມ, ຮອງຫົວໜ້າກົມ;

2.2 ສະຫຼຸບສັງລວມສະພາບວຽກງານຕິດຕາມກວດກາການປະຕິບັດກົດໝາຍ ຢູ່ສູນດັດສ້າງໃນທົ່ວປະເທດ, ການລົງກວດກາສູນດັ່ງກ່າວຂອງໄອຍະການປະຊາຊົນ;

2.3 ເກັບກຳສະຖິຕິຜູ້ດັດສ້າງແຕ່ລະແຂວງ, ຂອບເຂດທົ່ວປະເທດ ( ມີການໄຈ້ແຍກ )

2.4 ເກັບກຳການປະພຶດຂອງເຈົ້າໜ້າທີ່ຕໍ່ຜູ້ດັດສ້າງ, ຄຳສັ່ງຕ່າງໆທີ່ບໍ່ສອດຄ່ອງກັບກົດໝາຍ.

- ພະແນກກວດກາຄ້າຍດັດສ້າງ ແລະ ອະໄພຍະໂທດ

1. **ຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:**

1.1 ຮັບຜິດຊອບລວມພາຍໃນພະແນກ, ພົວພັນໂດຍກົງກັບຜູ້ຊີ້ນຳເຊັ່ນ: ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພາກສ່ວນກ່ຽວຂ້ອງ ເພື່ອລາຍງານວຽກງານຕ່າງໆ ແລະ ຮັບເອົາມະຕິຄຳສັ່ງໄປຜັນຂະຫຍາຍຢູ່ພາຍໃນພະແນກ, ມີຄຳເຫັນຕໍ່ບັນຫາຕ່າງໆທີ່ໜ່ວຍງານ, ວິຊາການເພື່ອສັງລວມຂໍຄຳເຫັນ ແລະ ຕິດຕາມການປະຕິບັດຄຳຕົກລົງ.

1.2 ກວດກາເອກະສານຕ່າງໆກ່ອນທີ່ຈະຂໍຄຳເຫັນ ຫຼື ລາຍເຊັນຈາກຂັ້ນເທິງ ແລະ ແຈກຢາຍວຽກງານທີ່ຂັ້ນເທິງເຫັນດີມອບໝາຍໃຫ້;

1.3 ສັງລວມບັນດາຂໍ້ມູນຕ່າງໆ ແຜນການເຄື່ອນໄຫວນຳພາວຽກງານພະແນກປະຈຳເດືອນຕາມທິດຊີ້ນຳຂອງກົມ;

1.4 ກວດກາ ແລະ ເຄື່ອນໄຫວວຽກງານຕິດຕາມພາລະບົດບາດຂອງພະແນກມອບໝາຍໃຫ້ບຸກຄົນຮັບຜິດຊອບ ແລະ ວາງທິດທາງແຜນການຕໍ່ໜ້າ ສ້າງບົດສະຫລຸບ ແລະ ແຜນການເຄື່ອນໄຫວຂອງພະແນກ.

1.5 ຄົ້ນຄວ້າຄຳຮ້ອງກ່ຽວກັບຜູ້ຖືກດັດສ້າງ, ນັກໂທດ;

1.6 ສ້າງແຜນການຕ່າງໆ ກ່ຽວກັບການລົງເຄື່ອນໄຫວຕິດຕາມກວດກາສະຖານທີ່ກັກຕົວ, ກັກຂັງ ແລະ ຄຸມຂັງ-ດັດສ້າງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

1.7 ເຮັດວຽກງານການອະໄພຍະໂທດ ແລະ ວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າກົມ.

2. ຮອງຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:

2.1 ເປັນຜູ້ຊ່ວຍວຽກຫົວໜ້າພະແນກປະຕິບັດສິດ , ໜ້າທີ່ຕາມການມອບໝາຍ ແລະ ປະຕິບັດຕາມຄຳສັ່ງຂອງຫົວໜ້າກົມ, ຮອງຫົວໜ້າກົມ;

2.2 ເກັບກຳ ແລະ ຕີລາຄາຈຳນວນສະຖານທີ່ກັກຕົວ, ກັກຂັງ, ຄ້າຍດັດສ້າງໃນຂອບເຂດທົ່ວປະເທດ, ຕີລາຄາລົງກວດກາຄ້າຍດັ່ງກ່າວຂອງໄອຍະການປະຊາຊົນ;

2.3 ເກັບກຳສະຖິຕິນັກໂທດແຕ່ລະແຂວງ ແລະ ທົ່ວປະເທດ ( ມີການໄຈ້ແຍກຍິງ, ຊາຍ, ເດັກ ແລະ ອື່ນໆ );

2.4 ເກັບກຳກ່ຽວກັບ ການຈັບຕົວ, ການກັກຂັງທີ່ບໍ່ຖືກຕ້ອງ ( ກາຍກຳນົດ, ບໍ່ມີໃບກັກຂັງພາງ ແລະ ອື່ນໆ ) ແລະ ການແກ້ໄຂປ່ອຍຕົວພວກດັ່ງກ່າວແຕ່ລະໄລຍະ;

2.5 ເກັບກຳການປິ່ນປົວນັກໂທດ ( ທຳມະດາ ແລະ ປິ່ນປົວຢູ່ນອກ ) ການໂຕນໜີຂອງນັກໂທດເວລາປິ່ນປົວ;

2.6 ເກັບກຳການໂຍກຍ້າຍນັກໂທດລະຫວ່າງ ສູນກາງ ແລະ ແຂວງ, ລະຫວ່າງແຂວງຕໍ່ແຂວງ ແລະ ການໂຕນໜີຂອງນັກໂທດເວລາໂຍກຍ້າຍ;

2.7 ເກັບກຳການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ;

2.8 ເກັບກຳການປະພຶດຂອງເຈົ້າໜ້າທີ່ຕໍ່ນັກໂທດ, ຄຳສັ່ງຕ່າງໆທີ່ບໍ່ສອດຄ່ອງກັບກົດໝາຍ;

2.9 ເກັບກຳການເລືອກເຟັ້ນນັກໂທດຜູ້ປະພຶດດີສະເໜີຂໍອະໄພຍະໂທດ.

- **ພະແນກກວດກາການປະຕິບັດຄຳຕັດສິນຂອງສານ**

1. ຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:

1.1 ຮັບຜິດຊອບລວມພາຍໃນພະແນກ, ພົວພັນໂດຍກົງກັບຜູ້ຊີ້ນຳເຊັ່ນ: ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພາກສ່ວນກ່ຽວຂ້ອງ ເພື່ອລາຍງານວຽກງານຕ່າງໆ ແລະ ຮັບເອົາມະຕິຄຳສັ່ງໄປຜັນຂະຫຍາຍຢູ່ພາຍໃນພະແນກ, ມີຄຳເຫັນຕໍ່ບັນຫາຕ່າງໆທີ່ໜ່ວຍງານ, ວິຊາການເພື່ອສັງລວມຂໍຄຳເຫັນ ແລະ ຕິດຕາມການປະຕິບັດຄຳຕົກລົງ.

1.2 ກວດກາເອກະສານຕ່າງໆກ່ອນທີ່ຈະຂໍຄຳເຫັນ ຫຼື ລາຍເຊັນຈາກຂັ້ນເທິງ ແລະ ແຈກຢາຍວຽກງານທີ່ຂັ້ນເທິງເຫັນດີມອບໝາຍໃຫ້;

1.3 ຄົ້ນຄວ້າຄຳຮ້ອງ ຂໍຄວາມເປັນທຳກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຄະດີແພ່ງ ແລະ ອາຍາ ທີ່ຍັງບໍ່ໄດ້ຮັບຄວາມເປັນທຳ;

1.4 ສັງລວມບັນດາຂໍ້ມູນຕ່າງໆແຜນການເຄື່ອນໄຫວນຳພາວຽກງານພະແນກປະຈຳເດືອນຕາມທິດຊີ້ນຳຂອງກົມ;

1.5 ກວດກາ ແລະ ເຄື່ອນໄຫວວຽກງານຕິດຕາມພາລະບົດບາດຂອງພະແນກມອບໝາຍໃຫ້ບຸກຄົນຮັບຜິດຊອບ ແລະ ວາງທິດທາງແຜນການຕໍ່ໜ້າ ສ້າງບົດສະຫລຸບ ແລະ ແຜນການເຄື່ອນໄຫວຂອງພະແນກ.

2. **ຮອງຫົວໜ້າພະແນກມີສິດ, ໜ້າທີ່ດັ່ງນີ້:**

2.1 ເປັນຜູ້ຊ່ວຍວຽກຫົວໜ້າພະແນກປະຕິບັດສິດ , ໜ້າທີ່ຕາມການມອບໝາຍ ແລະ ປະຕິບັດຕາມ ຄຳສັ່ງຂອງຫົວໜ້າກົມ, ຮອງຫົວໜ້າກົມ;

2.2 ຄົ້ນຄວ້າຄຳຮ້ອງກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

2.3 ສ້າງແຜນການຕ່າງໆກ່ຽວກັບການລົງເຄື່ອນໄຫວຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຢູ່ສູນກາງ ແລະ ທ້ອງຖິ່ນ;

2.4 ເກັບກຳຂຶ້ນບັນຊີ ແລະ ສັງລວມລາຍງານສະຖິຕິການປະຕິບັດຄຳຕັດສິນທາງແພ່ງ ແລະ ອາຍາ ໃນຂອບເຂດທົ່ວປະເທດ;

2.5 ເຮັດວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າກົມ, ຮອງກົມ.

- **ຂະແໜງບໍລິຫານ ແລະ ຂາເຂົ້າ - ຂາອອກ**

1. ຄຸ້ມຄອງເອກະສານຕ່າງໆ ເຂົ້າ - ອອກ ພາຍໃນກົມໃຫ້ຖືກຕ້ອງ, ເປັນລະບຽບ, ຈະແຈ້ງ ແລະ ຮັກສາຄວາມລັບ;
2. ຄົ້ນຄວ້າສ້າງແຜນການວຽກງານບໍລິຫານເຊັ່ນ: ວຽກງານການຄຸ້ມຄອງວັດຖຸສິ່ງຂອງພາຍໃນກົມ ແລະ ການເບີກຈ່າຍເຄື່ອງຮັບໃຊ້ຕ່າງໆເຂົ້າໃນການເຄື່ອນໄຫວວຽກງານວິຊາການພາຍໃນກົມ;
3. ປົກປັກຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍໃນຫ້ອງການ, ບ່ອນເຮັດວຽກ;
4. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຫົວໜ້າກົມ.

## <u>ໝວດທີ VI</u>

## ລະບອບແບບແຜນວິທີເຮັດວຽກ

<u>ມາດຕາ 13:</u> ແບບແຜນວິທີເຮັດວຽກຂອງກົມກວດກາຄ້າຍດັດສ້າງ

1. ປະຕິບັດຕາມກົດໝາຍ ແລະ ຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

2. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບປະຕິບັດລະບອບຫົວໜ້າດຽວ;
3. ປະຕິບັດຕາມທິດທາງຂອງອົງການໄອຍະການປະຊາຊົນສູງສຸດ ທັງເປັນວຽກງານລະອຽດ, ສ້າງເປັນແຜນການແຕ່ລະໄລຍະຂອງກົມປະຈຳອາທິດ, ເດືອນ ແລະ ປີຕາມລະບົບ;
4. ມີການປະຊຸມລາຍງານ, ປະຕິບັດລະບອບສ່ອງແສງ , ມີການສະຫລຸບຕີລາຄາຜົນໄດ້ຜົນເສຍເພື່ອວາງທິດທາງຈັດຕັ້ງປະຕິບັດຕໍ່ໄປໃຫ້ຖືກຕ້ອງສອດຄ່ອງ ແລະ ມີປະສິດທິຜົນ ໃນການເຄື່ອນໄຫວວຽກງານຂອງກົມ.
5. ປະຕິບັດການຄຸ້ມຄອງໂດຍຕິດພັນກັບການຕິດຕາມກວດກາ ແລະ ຊຸກຍູ້ທຸກພະແນກ, ທຸກພາກສ່ວນປະຕິບັດຂໍ້ກຳນົດ ແລະ ລະບຽບກົດໝາຍ;
6. ທຸກໆເອກະສານທີ່ເຂົ້າອອກກົມຕ້ອງຜ່ານໜ່ວຍງານຄຸ້ມຄອງບໍລິຫານຂາເຂົ້າ-ອອກຂອງກົມ ຈຶ່ງຖືເປັນວຽກງານທາງລັດຖະການ.

## <u>ໝວດທີ VII</u>
## ບົດບັນຍັດສຸດທ້າຍ

<u>າດຕາ 14:</u> ກົມກວດກາຄ້າຍຄຸມຂັງ-ດັດສ້າງ ມີຕາປະທັບຂອງກົມ ເພື່ອນຳໃຊ້ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ແລະ ຂອບເຂດສິດນຳໃຊ້ຕາປະທັບແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະຫົວໜ້າ ອົງການໄອຍະການປະຊາຊົນສູງສຸດເປັນຜູ້ຕົກລົງ.

<u>ດຕາ 15</u>: ກົມກວດກາຄ້າຍຄຸມຂັງ-ດັດສ້າງ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ, ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 282/ອອປສ, ລົງວັນທີ 27/7/2004.

<u>ດຕາ 16</u>: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ຄຳສານ ສຸວົງ